

ການບິນລາວ
Lao Airlines

# Champa Meuanglao

Official Lao Airlines Inflight Magazine

ຈຳປາເມືອງລາວ

ລາວທ່ຽວລາວ
LAO THIAO LAO

**4000 ISLANDS**
Visit Laos' southernmost point

**FORECASTING SUCCESS**
Laos Climate Service for Agriculture

## *Wonders* OF THE ANNAMITE MOUNTAINS

**MARCH / APRIL 2021**

COMPLIMENTARY COPY



# Wonders OF THE ANNAMITE MOUNTAINS

Discover the amazing wildlife that Laos has to offer

TEXT BY **DR. CAMILLE COUDRAT**
PHOTOGRAPHS BY **ASSOCIATION ANOULAK / NAKAI-NAM THEUN NATIONAL PARK**

Red-shanked Douc (*Pygathrix nemaeus*) photographed in its natural habitat

The Annamite Mountains, which extend from northern Vietnam along the border area with Laos and south into the border between Laos, Vietnam, and Cambodia, is one of the richest regions of the world in terms of its fauna, flora, landscape, and cultural diversity. In Laos, the Annamite Mountains lie to the east of the Mekong River, along the Lao-Vietnam border, from the province of Bolikhamxay in central Laos to the Attapeu in the south. It encompasses landscapes as varied and impressive as karst formations, dense mountainous dry and moist evergreen forests, and coniferous forests.

All these habitats are particularly well-represented in Khammouan Province and particularly in the Nakai-Nam Theun National Park, the Hin Namno National Park, and the Phou Hinpoun National Protected Area where several eco-tourism tours are offered. Indeed, Khammouan is a famous tourist destination for Lao nationals as well as foreign visitors in search of outdoor adventures, discoveries, and breathtaking scenery.

The Annamite Mountains hold an extraordinary diversity of animal species that are found nowhere else on earth. These species are difficult to observe in the wild and therefore are not well known to the public. But they are highly threatened by extinction; indeed, all the species found in the Annamite Mountains are hunted out from forests due to the high demand for the illegal national and international wildlife trade, destined to bushmeat, traditional medicine, pets, or status symbol trophies. Therefore, they deserve to be put in the spotlight for their singular beauty and intrinsic value: they represent the natural heritage of Laos.

The Red-shanked Douc *(Pygathrix nemaeus)* is a monkey species often referred to as one of the most beautiful in the world due to its bright colors. The species only occurs in the Annamite Mountains and its largest population is found in Laos.

The White-cheeked Gibbon *(Nomascus siki)* is a primate species found only in the Annamite Mountains. It lives in family groups of three to five individuals composed of a yellow-furred mother, a black-furred father with bright white cheeks, and the young ones (their fur coloration changes several times before they reach adulthood). Gibbons are known for their characteristic beautiful and mesmerizing duet songs that members of the family produce every morning at dawn to reinforce their bond and inform neighboring groups of their territory. ›

The Large-antlered Muntjac (*Muntiacus vuquangensis)* is a species of deer that was only discovered by the scientific community in 1994. It owes its name to its particularly large antlers and larger body size compared to other muntjac species. The largest population is found in the Annamite Mountains of Laos.

If you travel to the Annamite Mountains, you should also be aware of the Saola (*Pseudoryx nghetinhensis*). The Saola is a bovid species, closely related to wild cattle, and is one of the most remarkable mammal discoveries of the twentieth century, first discovered by scientists in 1992 in the wet evergreen forests of the Annamite Mountains of Vietnam and Laos. Today, very few individuals remain in the wild.

Other species found nowhere else on earth is the Annamite Striped Rabbit (*Nesolagus timminsi)* or the Owston's Palm Civet (*Chrotogale owstoni)* both as unique and fascinating as all the others.

All of these species provide just a glimpse of the faunal diversity of the Annamite Mountains which many scientists and organizations have dedicated their efforts to protect for future generations. ■



1



2



3

**1.** Entering the mountainous Nakai-Nam Theun National Park by boat, along the Nam Xot
**2.** Black Giant Squirrel (*Ratufa bicolor)*
**3.** White-cheeked Gibbon (*Nomascus siki)*
**4.** One of the few photographs of Saola (*Pseudoryx nghetinhensis*). Taken in the wild with a camera-trap in central Laos in 1999
**5.** Owston's Civet (*Chrotogale owstoni)* monitored as part of the conservation management strategy









MORE INFO
Learn more about Association Anoulak's conservation work in Laos: conservationlaos.com

GETTING THERE
To book an ecotour to visit some of these, contact Phosy Thalang Guesthouse in Nakaifacebook.com/PhosyThalangGuesthouse



5







# ຄວາມມະຫັດສະຈັນ ຂອງ ສາຍພູຫຼວງ

## ຄົ້ນພົບສັດປ່າທີ່ໜ້າອັດສະຈັນທີ່ສາມາດເຫັນໄດ້ໃນປະເທດລາວ

ແປ ແລະ ຮຽບຮຽງໂດຍ **ວັນນະແສງ ອິນສານ**
ຮູບໂດຍ **ສະມາຄົມອະນຸລັກ / ອຸທິຍານແຫ່ງຊາດນາກາຍ-ນໍ້າເທີນ**

**ຂໍ້ມູນເພີ່ມເຕີມ**
ຮຽນຮູ້ເພີ່ມເຕີມກ່ຽວກັບສະມາຄົມອະນຸລັກໃນລາວໄດ້ທີ່: conservationlaos.com

**ວິທີເດີນທາງໄປ**
ທ່ານສາມາດຈອງທົວທ່ອງທ່ຽວແບບທໍາມະຊາດ (ecotour) ເພື່ອເຂົ້າໄປທ່ຽວຊົມສະຖານທີ່ເຫຼົ່ານີ້ ໄດ້ໂດຍການຕິດຕໍ່ຫາ ເຮືອນພັກໂພສີ ທ່າລັ່ງ ທີ່ ນາກາຍ facebook.com/Phosy ThalangGuesthouse

ສາຍພູຫຼວງ ທີ່ຍາວຢຽດມາຈາກພາກເໜືອຂອງປະເທດຫວຽດນາມ ລັດລຽບໄປຕາມເຂດຊາຍແດນທີ່ຕິດກັບລາວ ແລ້ວແກ່ຍາວລົງໄປທາງພາກໃຕ້ອັນເປັນຊາຍແດນຕິດຕໍ່ກັນລະຫວ່າງລາວ, ຫວຽດນາມ ແລະ ກໍາປູເຈຍ ແມ່ນໜຶ່ງໃນຂົງເຂດທີ່ອຸດົມສົມບູນໄປດ້ວຍສັດ, ພືດ, ພູມສັນຖານ ແລະ ຄວາມຫຼາກຫຼາຍທາງດ້ານວັດທະນະທໍາທີ່ສຸດໃນໂລກ. ສໍາລັບປະເທດລາວ, ສາຍພູຫຼວງຕັ້ງຢູ່ທາງທິດຕາເວັນອອກຂອງແມ່ນໍ້າຂອງທີ່ລຽບຕາມຊາຍແດນລາວ-ຫວຽດນາມ ນັບຕັ້ງແຕ່ແຂວງບໍລິຄໍາໄຊຈາກທາງພາກກາງ ລົງໄປຈົນເຖິງແຂວງອັດຕະປືທີ່ຢູ່ພາກໃຕ້ຂອງລາວ. ເຂດດັ່ງກ່າວຈະກວມເອົາພູມສັນຖານທີ່ແຕກຕ່າງກັນອອກໄປ ແລະ ເປັນທີ່ໜ້າປະທັບໃຈໄດ້ແກ່ຜາຫີນປູນ, ພູຜາປ່າດົງ ແລະ ປ່າສົນອັນຊຸ່ມເຢັນ.

ຖິ່ນທີ່ຢູ່ອາໄສທັງໝົດນີ້ ແມ່ນພົບເຫັນໄດ້ສະເພາະໃນແຂວງຄໍາມ່ວນ ແລະ ຕາມອຸທິຍານແຫ່ງຊາດນາກາຍ-ນໍ້າເທີນ, ອຸທິຍານແຫ່ງຊາດຫີນໜາມໜໍ່ ແລະ ເຂດປ່າສະຫງວນແຫ່ງຊາດພູຫີນບູນ ທີ່ມີການບໍລິການເປັນແບບທົວ ທ່ອງທ່ຽວທາງທໍາມະຊາດໃຫ້ໄດ້ລອງສໍາຜັດ. ແນ່ນອນວ່າແຂວງຄໍາມ່ວນ ແມ່ນສະຖານທີ່ທ່ອງທ່ຽວທີ່ມີຊື່ສຽງທັງສໍາລັບຄົນລາວ ແລະ ບັນດານັກທ່ອງທ່ຽວຕ່າງປະເທດ ໃນການສະແຫວງຫາການພະຈົນໄພແບບກາງແຈ້ງ, ການສໍາຫຼວດຄົ້ນຫາ ແລະ ຊົມທິວທັດທີ່ໜ້າຕື່ນຕາຕື່ນໃຈ.

ສາຍພູຫຼວງ ມີຄວາມຫຼາກຫຼາຍເປັນພິເສດທາງດ້ານສາຍພັນສັດທີ່ບໍ່ມີບ່ອນອື່ນອີກໃນໂລກນີ້. ສາຍພັນເຫຼົ່ານີ້ ແມ່ນຖືວ່າຍາກທີ່ຈະພົບເຫັນໄດ້ຕາມທໍາມະຊາດ ປະຊາຊົນທົ່ວໄປຈຶ່ງບໍ່ຄ່ອຍຮັບຮູ້ກ່ຽວກັບພວກມັນປານໃດ. ໃນຂະນະດຽວກັນ, ສັດເຫຼົ່ານີ້ກໍ່ມີຄວາມສ່ຽງສູງທີ່ຈະສູນພັນ; ແທ້ຈິງແລ້ວ, ທຸກໆສາຍພັນທີ່ພົບເຫັນໃນສາຍພູຫຼວງລ້ວນແລ້ວແຕ່ຖືກລ່າແລ້ວນໍາອອກໄປຈາກປ່າ ຍ້ອນມັນເປັນທີ່ຕ້ອງການສູງໃນແວດວົງການຄ້າສັດປ່າແບບຜິດກົດໝາຍທັງໃນລະດັບຊາດ ແລະ ສາກົນ, ຈຸດປະສົງແມ່ນເພື່ອພຽງເອົາຊິ້ນເຮັດເປັນຢາພື້ນເມືອງ, ເປັນສັດລ້ຽງ ຫຼື ເປັນສັນຍາລັກລາງວັນເພື່ອສະແດງຄວາມຮັ່ງມີຂອງຕົນເອງ. ເພາະສະນັ້ນ, ບັນດາສິ່ງທີ່ມີຊີວິດເຫຼົ່ານີ້ສົມຄວນທີ່ຈະໄດ້ຮັບການປົກປ້ອງເອົາໃຈໃສ່ໃນຄວາມງາມ ແລະ ຄຸນຄ່າທີ່ແທ້ຈິງເຊິ່ງກໍ່ຄື: ເປັນຕົວແທນໃຫ້ແກ່ມໍລະດົກທາງທໍາມະຊາດຂອງປະເທດລາວເຮົາ.

ຄ່າງຫ້າສີ (*Pygathrix nemaeus*) ເປັນສາຍພັນລິງທີ່ເປັນທີ່ຮູ້ຈັກວ່າເປັນໜຶ່ງໃນສາຍພັນທີ່ສວຍງາມທີ່ສຸດໃນໂລກ ຍ້ອນສີສັນອັນສົດໃສທີ່ເປັນເອກະລັກ. ສາຍພັນດັ່ງກ່າວຈະພົບເຫັນສະເພາະໃນເຂດພູຫຼວງ ແລະ ຈໍານວນທີ່ພົບເຫັນຫຼາຍກວ່າໝູ່ກໍ່ແມ່ນໃນປະເທດລາວ.

ທະນີແກ້ມຂາວ (*Nomascus siki*) ເປັນສາຍພັນສັດລ້ຽງລູກດ້ວຍນົມທີ່ພົບເຫັນໄດ້ສະເພາະຢູ່ໃນເຂດສາຍພູຫຼວງ. ມັນອາໄສແບບເປັນກຸ່ມຄອບຄົວຈໍານວນ ສາມ ຫາ ຫ້າ ໂຕເຊິ່ງຈະປະກອບດ້ວຍ ແມ່ທີ່ມີຂົນສີເຫຼືອງ, ພໍ່ທີ່ມີຂົນສີດໍາກັບແກ້ມສີຂາວ ແລະ ບັນດາລູກອ່ອນ (ສີຂົນຂອງພວກມັນຈະປ່ຽນແປງຫຼາຍໆຄັ້ງກ່ອນທີ່ພວກມັນຈະເຕີບໃຫຍ່ເຕັມໂຕ). ທະນີ ແມ່ນເປັນທີ່ຮູ້ຈັກກັນດີໃນສຽງຮ້ອງປະສານອັນສວຍງາມ ແລະ ອ່ອນໂຍນຈັບໃຈທີ່ບັນດາສະມາຊິກຂອງຄອບຄົວທະນີ ຈະພາກັນບັນເລງໃນທຸກໆເຊົ້າເພື່ອເສີມສ້າງຄວາມຜູກພັນຂອງພວກມັນເອງ ແລະ ປະກາດໃຫ້ບັນດາກຸ່ມທະນີເພື່ອນບ້ານໃກ້ຄຽງໃຫ້ຮູ້ວ່ານີ້ແມ່ນເຂດແດນຂອງພວກມັນ.

ເກ້ງຍັກພັນທາຍາກ (*Muntiacus vuquangensis*) ແມ່ນສາຍພັນກວາງຊະນິດໜຶ່ງທີ່ເອີ້ນວ່າ ເກ້ງ ເຊິ່ງຫາກໍ່ຖືກຄົ້ນພົບ ໂດຍຊຸມຊົນວິທະຍາສາດໃນປີ 1994.

**ທາງດ້ານຊ້າຍ**: ສະມາຊິກຄອບຄົວຂອງທະນີແກ້ມຂາວ
**1.** ນໍ້າຕົກຕາດໃນປ່າດົງດິບຂອງອຸທິຍານແຫ່ງຊາດນາກາຍ-ນໍ້າເທີນ
**2.** ນົກເງືອກສີນໍ້າຕານຄໍຂາວ
**3.** ຟານເຂົາໃຫຍ່ໂຕແມ່ ແລະ ລູກພັນທາຍາກໂຕແມ່ຂອງມັນ ໄດ້ຖືກຕິດຕາມກວດກາເຂົ້າເປັນສ່ວນໜຶ່ງຂອງຍຸດທະສາດການຄຸ້ມຄອງ







ຊື່ຂອງມັນແມ່ນໄດ້ມາຈາກຂະໜາດຂອງເຂົາ ແລະ ລໍາໂຕທີ່ໃຫຍ່ເມື່ອທຽບໃສ່ກັບສາຍພັນ ເກ້ງ ອື່ນໆ. ຈໍານວນພົບເຫັນຫຼາຍທີ່ສຸດແມ່ນຢູ່ທີ່ສາຍພູຫຼວງຂອງລາວ.

ຖ້າຫາກທ່ານມີແຜນທີ່ຈະເດີນທາງໄປເຂດສາຍພູຫຼວງ, ທ່ານກໍ່ຄວນຈະຮູ້ກ່ຽວກັບ ເສົາຫຼາ (*Pseudoryx nghetinhensis*). ເສົາຫຼາ ແມ່ນສາຍພັນງົວ ທີ່ມີຄວາມໃກ້ຄຽງກັບງົວປ່າ ແລະ ເປັນໜຶ່ງໃນການຄົ້ນພົບສັດລ້ຽງລູກດ້ວຍນໍ້ານົມທີ່ໂດດເດັ່ນທີ່ສຸດຂອງສັດຕະວັດທີ 20, ເຊິ່ງໄດ້ຖືກຄົ້ນພົບຄັ້ງທໍາອິດໂດຍນັກວິທະຍາສາດໃນປີ 1992 ໃນປ່າດົງດິບຂອງສາຍພູຫຼວງຫວຽດນາມ ແລະ ລາວ. ໃນປະຈຸບັນ, ເຮົາຈະເຫັນໄດ້ວ່າມີຈໍານວນທີ່ຫຼົງເຫຼືອຢູ່ຕາມທໍາມະຊາດໜ້ອຍຫຼາຍ.

ສາຍພັນອື່ນໆທີ່ບໍ່ສາມາດພົບເຫັນໄດ້ໃນບ່ອນໃດອີກໃນໂລກແມ່ນ ກະຕ່າຍລາຍເສືອ (*Nesolagus timminsi*) ຫຼື ເຫງັນລາຍເສືອ (*Chrotogale owstoni*) ຂອງສາຍພູຫຼວງທີ່ທັງເປັນເອກະລັກ ແລະ ໜ້າອັດສະຈັນໃຈບໍ່ນ້ອຍໜ້າສາຍພັນອື່ນໆ.

ບັນດາສາຍພັນທັງໝົດເຫຼົ່ານີ້ສະແດງໃຫ້ເຫັນພຽງແຕ່ສ່ວນໜຶ່ງຂອງຄວາມຫຼາກຫຼາຍຂອງສັດປ່າໃນສາຍພູຫຼວງທີ່ບັນດານັກວິທະຍາສາດ ແລະ ອົງການຈັດຕັ້ງຕ່າງໆໄດ້ອຸທິດຄວາມພະຍາຍາມຂອງພວກເຂົາໃນການປົກປ້ອງໄວ້ເພື່ອໃຫ້ຄົນລຸ້ນຫຼັງໄດ້ຮຽນຮູ້. ■